







# ການອະທິຖານ ໃນຊີວິດຈິງ

ບົດຮຽນທີ 7 ສຳລັບວັນທີ 16 ພຶດສະຯ 2026

“ຈົ່ງໄວ້ວາງໃຈໃນພຣະ
ເຈົ້າທຸກເວລາ
ປະຊາຊົນຂອງຂ້ອຍ
ເອີຍ ຈົ່ງທູນຄວາມ
ເດືອດຮ້ອນທຸກຢ່າງ
ໃຫ້ພຣະອົງຟັງ
ເພາະພຣະອົງເປັນທີ່
ເພິ່ງຂອງພວກເຮົາ”

(ພສສ 62:8)



ອຈ ໂປໂລ ເຕືອນພວກເຮົາໃຫ້ “ອະທິຖານຢູ່ສະເໝີ” (ອຟຊ. 6:18), ເຖິງວ່າໂລກຂອງພວກເຮົາຈະພັງທະລາຍລົງ; ເຖິງວ່າ ເວລາຈະຜ່ານໄປ ແລະ ພວກເຮົາກໍ່ຍັງບໍ່ໄດ້ຮັບຄໍາຕອບກໍ່ຕາມ

ໃນສະຖານະການແບບນີ້. ຄໍາອະທິຖານຂອງທ່ານ ເອລີຢາ ແລະ ນາງ ຮັນນາ ຈະຊ່ວຍໃຫ້ກໍາລັງໃຈພວກເຮົາໄດ້

ແລ້ວພວກເຮົາຈະອະທິຖານແບບໃດ? ພວກເຮົາຄວນຈະຂໍຫຍັງ? ເຮົາຄວນຈະອະທິຖານຄົນດຽວຫລືກັບຄົນອື່ນ? ຄໍາອະທິຖານຊ່ວຍໃຫ້ພວກເຮົາລົມກັບພຣະເຈົ້າໄດ້ເທົ່ານັ້ນບໍ?, ຫລືວ່າມັນຊ່ວຍໃຫ້ພວກເຮົາຟັງພຣະອົງໄດ້?









- ອະທິຖານໃນຊ່ວງທີ່ທຸກຍາກລໍາບາກ:
  - ເອລີຢາ: ອະທິຖານທ່າມກາງຄວາມວິກິດ
  - ນ.ຮັນນາ: ຄໍາອະທິຖານທີ່ລໍຖ້າຄໍາຕອບ
- ແບບຢ່າງຂອງການອະທິຖານ:
  - ພຣະເຢຊູ: ເນື້ອໃນຂອງການອະທິຖານ
  - ດານີເອນ: ໂຄງສ້າງຂອງການອະທິຖານ
- 4 ຄໍາຖາມກ່ຽວກັບການອະທິຖານ



# ອະທິຖານໃນຊ່ວງທີ່ ທຸກຍາກລຳບາກ

# ເອລີຢາ: ອະທິຖານທ່າມກາງຄວາມວິກິດ

"ເພິ່ນຕອບວ່າ, ຂ້າແດ່ພຣະເຈົ້າຢາເວ ພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ ຂ້ານ້ອຍຮັບໃຊ້ພຽງແຕ່ພຣະອົງມາຕະຫລອດ, ແຕ່ປະຊາຊົນອິດສະຣາເອນໄດ້ລະເມີດພັນທະສັນຍາຂອງພຣະອົງ, ໄດ້ທຳລາຍແທ່ນບູຊາຂອງພຣະອົງ ແລະ ໄດ້ຂ້າພວກຜູ້ທຳນວາຍຂອງພຣະອົງ. ມີແຕ່ຂ້ານ້ອຍຄົນດຽວທີ່ເຫລືອຢູ່ ແລະ ພວກເຂົາກໍພະຍາຍາມຈະຂ້າຂ້ານ້ອຍເສຍ" (1 ກສ 19:10)



ພຣະເຈົ້າຕອບຄຳອະທິຖານທ່າມກາງຄວາມວິກິດໄດ້ແນວໃດ?

ຫລັງຈາກຄຳອະທິຖານຂອງທ່ານ ເອລີຢາ, ພຣະເຈົ້າໄດ້ສົ່ງໄຟລົງມາໄໝ້ເຄື່ອງບູຊາ (1 ກສ 18:36-38).

ຫລັງຈາກອະທິຖານເພື່ອຝົນມາເປັນເວລາ 7 ຄັ້ງ, ພຣະເຈົ້າໄດ້ສົ່ງກ້ອນເມກນ້ອຍໆກ້ອນໜຶ່ງເຊິ່ງກາຍມາເປັນຝົນຫ່າໃຫຍ່ (1 ກສ 18:42-45).







ເມື່ອທ່ານ ເອລີຢາຂໍຄວາມຕາຍ, ພຣະອົງຊົງງຽບ, ແຕ່ສົ່ງທູດເທວະດາມາເບິ່ງແຍງລາວ (1 ກສ 19:4-8).

ຊ່ວງທີ່ເອລີຢາ ທໍ້ແທ້ໃນຖໍ້າ, ກໍໄດ້ຍິນສຽງຂອງພຣະເຈົ້າຕອບຄຳອະທິຖານທີ່ສິ້ນຫວັງຂອງລາວ (1 ກສ 19:9-18).

ການຕອບຄຳອະທິຖານບາງເທື່ອກໍ່ເກີດຂຶ້ນທັນທີ, ບາງເທື່ອຕ້ອງອະທິຖານ 7 ຄັ້ງ ແລະ ບາງເທື່ອກໍຕ້ອງຖ້າຫລັງຈາກ 40 ມື້, ພຣະເຈົ້າຊົງຮູ້ດີວ່າຄວນຈະຕອບຄຳອະທິຖານຊ່ວງເວລາໃດ ໃນແຕ່ລະສະຖານະການ



# ນ.ຮັນນາ ຄຳອະທິຖານທີ່ລໍຖ້າຄຳຕອບ

**“ຂ້ານ້ອຍໄດ້ພາວັນນາອະທິຖານຂໍລູກນຳພຣະອົງ ແລະພຣະເຈົ້າຢາເວກໍໂຜດໃຫ້ຕາມທີ່ຂ້ານ້ອຍໄດ້ພາວັນນາອະທິຖານຂໍນັ້ນແລ້ວ(1 ຊມອ 1:27)**



ຄຳອະທິຖານຂອງຮັນນາເລື່ອງຂໍໃຫ້ມີລູກຊາຍເບິ່ງຄືວ່າພຣະເຈົ້າຈະຕອບຢ່າງໄວວາ (ຫລັງຈາກການລໍຖ້າ ຢ່າງມີຄວາມສຸກເຖິງ 9 ເດືອນ) (1 ຊມອ. 1:9-20).



ຢ່າງໃດກໍ່ຕາມ ເມື່ອເຮົາອ່ານຂໍ້ຄຳພີກ່ອນໜ້ານີ້ (1 ຊມອ. 1:1-8).

ເປນິນນາ, ເມຍຂອງເອນການາ, ໄດ້ມີ “ລູກ Children”—ເຊິ່ງໝາຍຄວາມວ່າ, ຫລາຍກວ່າໜຶ່ງຄົນ—ແລະ“ໃນແຕ່ລະປີ” ນາງເຮັດໃຫ້ຮັນນາຮູ້ສຶກງຸດຫງິດເພາະຮັນນາບໍ່ມີລູກເລີຍ

ຈາກມຸມມອງນີ້, ນາງຮັນນາໃຊ້ເວລາຈັກປີໃນການຂໍລູກ ໂດຍບໍ່ໄດ້ຮັບຄຳຕອບ?





ບາງຄັ້ງການງຽບຂອງພຣະເຈົ້ານັ້ນເກີດຈາກຄວາມເຫັນແກ່ໂຕຂອງພວກເຮົາ (ຢກບ 4:3); ບາບທີ່ເຮົາຍັງຍຶດຕິດ (ພສສ 66:18); ຂາດຄວາມເຊື່ອ (ຢກບ 1:6); ຫລືວ່າ, ມັນຍັງບໍ່ທັນຮອດເວລາທີ່ເໝາະສົມເທື່ອ.

ບໍ່ວ່າຈະໃນກໍລະນີໃດ ພຣະເຈົ້າຊົງເບິ່ງເຫັນພາບລວມທັງໝົດ ແລະ ຊົງຮັບຮູ້ສິ່ງທີ່ດີທີ່ສຸດສຳລັບພວກເຮົາ (ຢຣມຢ 29:11). ພຣະອົງຈະຊົງຕອບຄຳອະທິຖານທີ່ຂໍດ້ວຍຄວາມເຊື່ອຢູ່ສະເໝີ, ໃນເວລາ ແລະ ວິທີຂອງພຣະອົງ(1 ຢຮ 5:14-15).

# ແບບຢ່າງຂອງ ການອະທິຖານ



# ພຣະເຢຊູ: ເນື້ອໃນຂອງການອະທິຖານ

"ດ້ວຍເຫດນັ້ນ ພວກເຈົ້າຄວນພາວັນນາອະທິຖານດັ່ງນີ້: ຂ້າແດ່ພຣະບິດາເຈົ້າຂອງພວກຂ້ານ້ອຍທັງຫລາຍ ຜູ້ຊົງສະຖິດຢູ່ໃນສະຫວັນ ຂໍໃຫ້ພຣະນາມຂອງພຣະອົງຊົງເປັນທີ່ເຄົາຣົບບູຊາ" (ມທ 6:9)



ການອະທິຖານແບບຍາວຢຽດ ເພື່ອເອົາໃຈແລະໄດ້ຮັບການຍົກຍ້ອງຈາກຜູ້ທີ່ຟັງ ບໍ່ແມ່ນຮູບແບບຂອງການອະທິຖານທີ່ພຣະອົງຊົງສອນພວກເຮົາ (ມທ 6:5-8).



ການອະທິຖານຂອງພວກເຮົາຄວນຈິງໃຈ ແລະ ລຽບງ່າຍ, ໃຊ້ພາສາທີ່ເຂົ້າໃຈໄດ້ໃນຊີວິດປະຈຳວັນ, ການອະທິຖານເປັນສ່ວນສຳຄັນໃນຊີວິດຂອງພວກເຮົາ



"ຈົ່ງຮຽນຮູ້ທີ່ຈະອະທິຖານສັ້ນໆ, ແລະ ຕົງປະເດັນ, ຂໍສະເພາະສິ່ງທີ່ທ່ານຕ້ອງການ. ຮຽນຮູ້ທີ່ຈະອະທິຖານອອກສຽງດັງຂະນະທີ່ຢູ່ກັບພຣະອົງ, ຢ່າອະທິຖານແບບເສແສ້ງ ແຕ່ຈົ່ງອະທິຖານດ້ວຍໃຈຈິງ ແລະ ມາຈາກໃຈຈິງ, ເຊິ່ງສະແດງເຖິງຄວາມຫິວກະຫາຍຂອງຈິດວິນຍານຕໍ່ພຣະອົງ (E.G.W. "Our high Calling", May 4)



# ພຣະເຢຊູ: ເນື້ອໃນຂອງການອະທິຖານ



ນີ້ແມ່ນເນື້ອໃນຂອງການອະທິຖານທີ່ພຣະເຢຊູຊົງມອບໃຫ້ແກ່ພວກເຮົາ:

| | |
|---|---|
| "ພຣະບິດາຜູ້ຊົງສະຖິດຢູ່ສະຫວັນ" | ພວກເຮົາຕ້ອງຄຳນຶງເຖິງຄວາມສຳພັນສ່ວນໂຕຂອງພວກເຮົາກັບພຣະບິດາ |
| "ຂໍພຣະນາມພຣະອົງເປັນທີ່ເຄົາຣົບບູຊາ" | ການຄຳນຶງເຖິງຄວາມບໍຣິສຸດຂອງພຣະເຈົ້າຈະນຳພວກເຮົາເຂົ້າໃກ້ພຣະອົງຫລາຍຂຶ້ນ |
| "ຂໍພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່" | ຂໍໃຫ້ພວກເຮົາປາຖະໜາເຖິງການສະເດັດກັບມາຂອງພຣະອົງ |
| "ຂໍໃຫ້ເປັນໄປຕາມນ້ຳພຣະໄທຂອງພຣະອົງ" | ຂໍໃຫ້ພວກເຮົາຍອມຮັບອຳນາດສູງສຸດ, ແລະ ຂໍໃຫ້ພວກເຮົາເຮັດຕາມນ້ຳພຣະໄທຂອງພຣອົງ |
| "ຂໍຊົງໂຜດປະທານເຂົ້າຈີ່ປະຈຳວັນ" | ຂໍໃຫ້ພວກເຮົາຂໍໃນສິ່ງທີ່ຕ້ອງການເພື່ອດຳຣົງຊີວິດ ທັງກາຍ ແລະ ຈິດວິນຍານ |
| "ຂໍຊົງໂຜດຍົກໂທດໃຫ້ຂ້ານ້ອຍ ເໝືອນທີ່ຂ້ານ້ອຍຍົກໂທດໃຫ້ຄົນອື່ນ" | ພວກເຮົາຕ້ອງກັບໃຈ, ຂໍການອະໄພ ແລະ ໃຫ້ອະໄພຜູ້ອື່ນ ດັ່ງທີ່ພຣະອົງໄດ້ເຮັດ |
| "ຂໍຢ່າພາຂ້ານ້ອຍເຂົ້າໄປໃນການທົດລອງ..ຂໍຊົງໂຜດໃຫ້ພົ້ນຈາກມານຊົ່ວຮ້າຍ" | ຂໍການປົກປ້ອງ ແລະ ໃຫ້ພຣະອົງເປັນທີ່ພັກພິງ ຈາກຄວາມຊົ່ວຮ້າຍ |
| "ເຫດວ່າ ຣາຊອານາຈັກ, ຣິດອຳນາດ...ເປັນຂອງພຣະອົງ" | ຍອມຮັບວ່າທຸກສິ່ງທີ່ພວກເຮົາເປັນ, ຄອບຄອງ ເປັນຂອງພຣະເຈົ້າ |

# ດານີເອນ: ໂຄງຮ່າງຂອງການອະທິຖານ

"ຂ້າພະເຈົ້າຕັ້ງໜ້າພາວັນນາອະທິຖານຂໍຕໍ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າ, ຖືສິນອົດອາຫານ, ນຸ່ງເສື້ອຜ້າກະສອບເຂົ້າ ແລະ ນັ່ງໃນຂີ້ເຖົ່າໄຟ"
(ດນອ 9:3)

ຄຳອະທິຖານທີ່ບັນທຶກໄວ້ໃນ ດນອ 9:4-19 ສະແດງໃຫ້ພວກເຮົາເຫັນເຖິງສ່ວນປະກອບພື້ນຖານ 4 ປະການ:



- ສັນຣະເສີນ (ດນອ 9:4)
- ສາລະພາບບາບ ແລະ ຂໍການອະໄພ(ດນອ 9:5-15)
- ທູນຂໍ (ດນອ 9:16-19)
- ຂອບພຣະຄຸນ (ຟລປ 4:6)



ດານີເອນຖືກຂັດຈັງຫວະໂດຍ ຄັບຣີເອນ ກ່ອນທີ່ລາວຈະອະທິຖານແລ້ວ (ການຂອບພຣະຄຸນ).

ຮູບແບບນີ້ໃຊ້ໄດ້ກັບການອະທິຖານແບບສ່ວນໂຕ ແລະ ໃນທີ່ສາທາລະນະ. ເຫັນໄດ້ຊັດເຈນວ່າ: ສ່ວນທີ່ກ່ຽວກັບ "ການສາລະພາບບາບ ແລະ ການໃຫ້ອະໄພ" ຄວນປັບໃຫ້ເຂົ້າກັບບໍຣິບົດ ແລະ ສະຖານທີ່ຂອງການນະມັດສະການ

ໂຄງຮ່າງນີ້ຊ່ວຍໃຫ້ພວກເຮົາມຸ່ງເນັ້ນການອະທິຖານໄປທີ່ພຣະເຈົ້າ, ປ້ອງກັນບໍ່ໃຫ້ການອະທິຖານເປັນຄືກັນກັບ "ລາຍການຊື້ເຄື່ອງ" ຈາກຄັງສິນບັດຂອງພຣະເຈົ້າ.





# 4 ຄຳຖາມກ່ຽວກັບການ ອະທິຖານ

## ເປັນຫຍັງຕ້ອງອະທິຖານເມື່ອພຣະເຈົ້າຊົງຮູ້ທຸກສິ່ງແລ້ວ?

ການອະທິຖານນຳພວກເຮົາຂຶ້ນໄປຢູ່ຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າ ແລະ ກະຕຸ້ນໃຫ້ພວກເຮົາສຳຫລວດໂຕເອງ ແລະ ທົບທວນຄວາມສຳພັນກັບພຣະອົງໃນແຕ່ລະມື້.

ເຖິງວ່າພວກເຮົາບໍ່ຮູ້ວ່າຈະເວົ້າຫຍັງ ພຣະວິນຍານບໍລິສຸດຈະຊ່ວຍພວກເຮົາ (ໂຣມ 8:26).



## ເປັນຫຍັງຕ້ອງອະທິຖານໃນເມື່ອທຸກຢ່າງກໍ່ຮຽບຮ້ອຍດີແລ້ວ?



ທູດສະຫວັນຜູ້ທີ່ບໍ່ໄດ້ເຮັດບາບ ຍັງນະມັດສະການພຣະອົງ, ແລ້ວພວກເຮົາຜູ້ເປັນຄົນບາບຍິ່ງຄວນຈະເຮັດແບບນີ້ຫລາຍເທົ່າໃດ?

ການຄິດວ່າທຸກຢ່າງດີແລ້ວພວກເຮົາຈຶ່ງບໍ່ຕ້ອງການພຣະອົງ, ນັ້ນເປັນຄວາມຄິດທີ່ຍິ່ງຍະໂສ

## ພວກເຮົາຄວນຈະອະທິຖານຮ່ວມກັບໃຜດີ?

ຂຶ້ນກັບແຕ່ລະສະຖານະການ:

1. ໃນຄວາມງຽບສະຫງົບ: ການອະທິຖານຂອງພວກເຮົາຈະໃກ້ຊິດກັບພຣະອົງທີ່ສຸດ.
2. ກັບຄອບຄົວຫລືກຸ່ມນ້ອຍໆ.
3. ໃນຄຣິດຕະຈັກ.







## ຂ້ອຍຈະຟັງສຽງຂອງພຣະເຈົ້າໄດ້ແນວໃດ?



ວິທີທີ່ຊັດເຈນ ແລະ ປອດໄພທີ່ສຸດແມ່ນການປະສົມການອະທິຖານເຂົ້າກັບການສຶກສາພຣະຄຳພີໃຫ້ເປັນສ່ວນໜຶ່ງຂອງການອະທິຖານ, ຫລີກລ້ຽງການປ່ອຍໃຈໃຫ້ຫວ່າງເປົ່າ ຫລື ຟັງແຕ່ຕົນເອງ

EGW (Our Father Cares, May 25)

“ການອະທິຖານຂອງພວກເຮົາຕ້ອງມາຈາກຄວາມຮູ້ສຶກຢ່າງເລິກເຊິ່ງ ເຖິງຄວາມຕ້ອງການຂອງພວກເຮົາ ແລະ ຄວາມປາຖະໜາຢ່າງແຮງກ້າໃນສິ່ງທີ່ພວກເຮົາທູນຂໍ. ບໍ່ສະນັ້ນຄຳອະທິຖານຂອງພວກເຮົາຈະບໍ່ໄດ້ຮັບການຕອບ ແຕ່ພວກເຮົາບໍ່ຄວນທໍ້ແທ້ ແລະ ເຊົາການອະທິຖານວິງວອນພຽງເພາະວ່າ ຄຳຕອບນັ້ນຍັງບໍ່ໄດ້ຮັບການຕອບໃນທັນທີ “ອານາຈັກສະຫວັນກໍຖືກຍາດຊິງເອົາຢ່າງຮຸນແຮງ ແລະ ພວກທີ່ມີໃຈຮຸນແຮງກໍເປັນຜູ້ຍາດຊິງເອົາໄດ້” (ມທ 11:12). ການຕໍ່ສູ້ດີ້ນຮົນໃນທີ່ນີ້ໝາຍເຖິງຄວາມຈິງໃຈອັນສັກສິດ ເຊັ່ນດຽວກັບທີ່ຢາໂຄບໄດ້ສະແດງໃຫ້ເຫັນ, ພວກເຮົາບໍ່ຈຳເປັນຕ້ອງພະຍາຍາມເຮັດໃຫ້ໂຕເອງຮູ້ສຶກຕື່ນເຕັ້ນຢ່າງຫລາຍ ແຕ່ພວກເຮົາຄວນທີ່ຈະສະຫງົບ ແລະ ອົດທົນ. ວິງວອນຕໍ່ພຣະເຈົ້າ, ວຽກງານຂອງພວກເຮົາແມ່ນການຖ່ອມໂຕຕໍ່ໜ
◌້າພຣະພັກຂອງພຣະອົງ, ສາລະພາບບາບຂອງພວກເຮົາ ແລະ ຫຍັບເຂົ້າໃກ້ພຣະເຈົ້າດ້ວຍຄວາມເຊື່ອ.”